# ການສົ່ງເສີມກະສິກຳສີຂຽວ: ພາກສະເໜີ





Andrew Bartlett
*Team Leader and Policy Adviser*
*Lao Upland Rural Advisory Service*


Lao Uplands Conference
Luang Prabang
13th March 2018

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service

# ເລີ່ມຕົ້ນຈາກ ກະສິກຳ-ນິເວດ




- Wezel A, Bellon S, Doré T, Francis C, Vallod D, David C (2009) *Agroecology as a science, a movement and a practice. A review*. Agronomy for Sustainable Development 29, 503-515.

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service

# ສິ່ງທີ່ພົບເຫັນໂດຍທົ່ວໄປ




- Wezel A, Bellon S, Doré T, Francis C, Vallod D, David C (2009) *Agroecology as a science, a movement and a practice. A review*. Agronomy for Sustainable Development 29, 503-515.

# ທັດສະນະຄະຕິລວມ

- ທັດສະນະຕິລວມຕໍ່ກັບອາຫານ ແລະ ລະບົບການຜະລິດກະສິກຳ ແມ່ນມີການຫັນປ່ຽນຈຸດສູມຈາກການເບິ່ງແຕ່ສ່ວນໃດໜຶ່ງສະເພາະມາເບິ່ງ *ຄວາມສຳພັນ* ນຳກັນ.
- ໂດຍສະເພາະຄວາມເຊືອມໂຍງກັນທີ່ສົ່ງຜົນຕໍ່ລະບົບສຸຂະພາບໂດຍລວມ ຊຶ່ງສາມາດເບິ່ງເຫັນໄດ້ໃນແງ່ຂອງການຜະລິດ, ຄວາມທົນທານ, ຄວາມປອດໄພ, ຄວາມຍຸດຕິທຳ... ແລະ ຄວາມຍືນຍົງ.
- ຄວາມເຊື່ອມໂຍງເຫຼົ່ານັ້ນອາດມີຫຼາຍຮູບແບບ, ເຊິ່ງລວມເຖິງຄວາມສຳພັນລະຫວ່າງປັດໄຈດ້ານການຜະລິດ, ແນວພັນ, ບັນດາຜູ້ດຳເນີນການ ແລະ ສະຖາບັນຕ່າງໆ.
- ເບິ່ງຮູບການຂອງ Wezel’s :
  - ຖ້າເປັນ <u>ຂົງເຂດ</u> ກະສິກຳນິເວດແມ່ນຊ່ວຍໃຫ້ເຮົາເຂົ້າໃຈກ່ຽວກັບຄວາມສຳພັນເຫຼົ່ານີ້.
  - ຖ້າແມ່ນຊຸດຂອງ <u>ວິທີການປະຕິບັດ</u> ກະສິກຳນິເວດສາມາດແມ່ນປັບປຸງການຄ້◌ຸມຄອງສາຍພົວພັນເຫຼົ່ານີ້.
  - ຖ້າເບິ່ງເປັນ <u>ການເຄືອນໄຫວ</u> ກະສິກຳນິເວດ ແມ່ນສົ່ງເສີມ ແລະ ປ້ອງກັນສາຍສຳພັນບາງອັນ

# ການສົ່ງຜົນຕໍ່ຂະບວນການຮຽນຮູ້

- ທັດສະນະຄະຕິລວມຂອງນິເວດກະສິກຳ ຍັງຮຽກຮ້ອງໃຫ້ພວກເຮົາມີການ ປ່ຽນວິທີສ້າງຄວາມຮູ້ ແລະ ຕັດສິນໃຈ.
- ການເຂົ້າໃຈ ແລະ ຮັກສາສາຍສຳພັນພາຍໃນລະບົບອາຫານ ບໍ່ສາມາດ ຈັດການດ້ານວິຊາການດ້ວຍການເຮັດຂອງໃຜຂອງລາວໄດ້
- ແລະຈະຕ້ອງໄດ້ຄຳນຶງເຖິງຄວາມຫຼາກຫຼາຍ ແລະ ຄວາມແຕກຕ່າງຂອງສາຍ ສຳພັນເຫຼົ່ານັ້ນ
- ຈະສາມາດບັນລຸຜົນໄດ້ກໍ່ເມື່ອນຳໃຊ້ບັນດາວິທີການນີ້:
  - ເຮັດຢູ່ໃນສະຖານທີ່ໃດໜຶ່ງສະເພາະ
  - ມີຜູ້ທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ
  - ຕ້ອງເຮັດແລ້ວເຮັດອີກເພື່ອປັບປຸງໃຫ້ດີຂຶ້ນ

# ການສົ່ງເສີມກະສິກຳສີຂຽວ

- **ການສົ່ງເສີມກະສິກຳສີຂຽວ** ແມ່ນຊື່ທີ່ພວກເຮົາຈະນຳໃຊ້ໃນຂະບວນການ ຮຽນຮູ້ເພື່ອສະໜັບສະໜູນການຜັນຂະຫຍາຍກະສິກຳຍືນຍົງ.
- **ການສົ່ງເສີມກະສິກຳສີຂຽວ** ແມ່ນຮູບແບບໜຶ່ງຂອງການບໍລິການສົ່ງເສີມກະສິກຳທີ່ສະໜອງໂດຍພາກລັດ ແລະ ພາກສ່ວນອື່ນໆທີໃຫ້ການສະໜັບສະໜູນ ຕໍ່ການພັດທະນາການຜະລິດທີຮັບປະກັນຊີວິດການເປັນຢູ່ທີ່ດີໃນອານາຄົດ ໃຫ້ກັບຊຸມຊົນຢູ່ເຂດຊົນນະບົດ.
- **ການສົ່ງເສີມກະສິກຳສີຂຽວ** ບໍ່ແມ່ນວິທີການດຽວ ຫຼື ມາດຕະການ ເພື່ອໃຫ້ບັນລຸຄວາມຍືນຍົງ. ແຕ່ເປັນຮູບແບບທີ່ລວມດ້ວຍວິທີການຫຼາຍໆອັນທີ່ແຕກຕ່າງກັນເພື່ອນຳໃຊ້ໃນການສົ່ງເສີມໂດຍອີງຕາມເນື້ອໃນໃຈຄວາມຕ່າງໆ.



ການສົ່ງເສີມ
ກະສິກຳສີຂຽວ
ເນື້ອໃນ
ຄົນຮຽນຮູ້ຫຍັງແດ່
SRI
ນິເວດກະສິກຳ
ຕະຫຼາດ ປອດສານ ພິດ
ການແປຮູບ ຂະໜາດນ້ອຍ
IPM
ການອອກຢັ້ງຢືນ
perma-culture
SALT
ກະສິກຳ-ປ່າໄມ້
ການຄຸ້ມຄອງອົງການຈັດຕັ້ງ ຊາວກະສິກອນ ແລະ ສະຫະ ກອນ
ວິທີການ
ຄົນຮຽນວິທີໃດແດ່
ການແລກລະຫວ່າງຊາວ ກະສິກອນ ແລະ ຊາວ ກະສິກອນ
ການຄົ້ນຄ້ວາວິໄຈໂດຍ ການເຮັດຕົວຈິງ
FFS
PTD
ເກມ-ການ ຕັດສິນໃຈ
PLUP
ໂຮງຮຽນທີ່ເປັນ ມິດຕໍ່ລະບົບນິ ເວດ
PRA
ການປະເມີນ ຕ່ອງໂສ້ຕະຫຼາດ ແບບມີສ່ວນຮ່ວມ
ເຄືອຂ່າຍ ການຮຽນຮູ້

# ຄວາມຮູ້ຂອງທ້ອງຖິ່ນເປັນກຸນແຈ

- ສຳລັບທຸກໆວິທີການສຳລັບ **ການສົ່ງເສີມກະສິກຳສີຂຽວ** ສິ່ງທີ່ມີຄ້າຍຄືກັນ ແມ່ນ *ການສ້າງ, ການແບ່ງປັນ ແລະ ການນຳໃຊ້ພູມປັນຍາທ້ອງຖິ່ນ.*
- ຮູບແບບວິທີການປະຕິບັດກະສິກຳຍືນຍົງ ຈະຕ້ອງໄດ້ປັບປ່ຽນໄປຕາມ ສະພາບຕົວຈິງຂອງທ້ອງຖິ່ນນັ້ນ. ເງື່ອນໄຂດັ່ງກ່າວນອກຈາກຫຼາກຫຼາຍແລ້ວ ຍັງມີຄວາມແຕກຕ່າງກັນໄປຢູ່ໃນແຕ່ລະເຂດພູດອຍຂອງລາວ.
- ດັ່ງນັ້ນ, **ການສົ່ງເສີມກະສິກຳສີຂຽວ** ຕ້ອງສະໜັບສະໜູນຊາວກະສິ ກອນໃຫ້ ຮູ້ຈັກການວິເຄາະບັນຫາ ແລະ ໂອກາດຕ່າງໆຢູ່ທ້ອງຖິ່ນ ລວມທັງທົດລອງ ທາງເລືອກການຜະລິດໃໝ່ທີ່ເໝາະສົມກັບເງື່ອນໄຂຕົວຈິງແຕ່ລະທ້ອງຖິ່ນ.

ການຕອບສະໜອງທີ່ຍືນຍົງ ຕໍ່ບັນຫາແລະໂອກາດ
ພາຍໃນທ້ອງຖິ່ນ ຈະເຮັດໄດ້ກໍ່ຕໍ່ເມື່ອມີ **ສ່ວນຮ່ວມ**
**ແລະ ມີການລົງມືທົດລອງເຮັດ**



# ການຮຽນຮູ້ພ້ອມກັນ

- **ການສົ່ງເສີມກະສິກຳສີຂຽວ** ບໍ່ແມ່ນແນວຄວາມຄິດທີ່ເປັນຂອງອົງການຈັດຕັ້ງ ຫຼື ໂຄງການໃດໜຶ່ງ. ທຸກໆຄົນສາມາດປະກອບສ່ວນໄດ້!
- ເພື່ອແບ່ງປັນ ແລະ ກຳນົດວິທີການຈັດຕັ້ງປະຕິບັດທີ່ດີ, ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ ຮ່ວມກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງຊຽງຂວາງໄດ້ຈັດກອງປະຊຸມສັງລວມປະສົບການຜ່ານມາ ຂອງການສົ່ງເສີມກະສິກຳສີຂຽວ ໂດຍການສະໜັບສະໜູນຂອງ LURAS/Helvetas ແລະ FAO.
- ມື້ນີ້ພວກເຮົາເປັນໂອກາດດີທີ່ຈະສືບຕໍ່ຂະບວນການເຫຼົ່ານັ້ນ:
  - ການນຳສະເໜີຈາກ PAFO ກ່ຽວກັບສິ່ງທີ່ໄດ້ເຮັດຢູ່ຊຽງຂວາງ, ພ້ອມທັງກອງປະຊຸມທີ່ມີນັກວິຊາການເຂົ້າຮ່ວມຫຼາຍກວ່າ 50 ຄົນ.
  - ການນຳສະເໜີຈາກ ກສປ ຫຼື DTEAP ກ່ຽວກັບປະສົບການໃນການຈັດຕັ້ງປະຕິບັດ **ການສົ່ງເສີມກະສິກຳສີຂຽວ** ທີ່ສະໜັບສະໜູນໂດຍໂຄງການ LURAS.
  - ການສົນທະນາລະຫວ່າງຜູ້ເຂົ້າຮ່ວມກອງປະຊຸມເພື່ອຊອກຫາວິທີການແກ້ໄຂ ແລະ ຮັບມືກັບບັນດາສິ່ງທ້າທາຍທີ່ສຳຄັນໃນການຜັນຂະຫຍາຍ ແລະ ຮັກສາ **ການສົ່ງເສີມກະສິກຳສີຂຽວ** ໃຫ້ຍືນຍົງ.

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service